# ການສເນີແນະໄປຕຣວດວິຈັຍ ການໄດ້ຍິນສຽງ



California Newborn Hearing Screening PROGRAM

State of California, Department of Health Services,
Children's Medical Services

## ເປັນຫຍັງລູກຂອງຂ້ອຍຈຶ່ງຕ້ອງການເຮັດການຕຣວດວິຈັຍການໄດ້ຍິນສຽງອັນໄໝ່ອີກ?

ມີບັນດາເດັກທາຣົກຫລາຍໆຄົນ ທີ່ຕ້ອງການເຮັດການຕຣວດວິຈັຍຫລ່ຳຄືນອີກ. ເດັກທາຣົກຂອງທ່ານນັ້ນ ບໍ່ ຈຳເປັນທີ່ຈະເສັຍ ຫູ. ມັນມີຫລາຍໆພາກສ່ວນທີ່ສາມາດເຂົ້າໄປແຊກແຊງຢູ່ໃນການທົດສອບເບິ່ງການໄດ້ຍິນ. ຍົກຕົວຢ່າງ, ມີສຽງດັງຢູ່ໃນຫ້ອງ, ເດັກທາຣົກທີ່ມັກຫນິງຕິງ, ຫລືມີນ້ຳ ຫລືເກັດຢູ່ໃນຫູ ທີ່ລົບກວນ ຫລືຕິດຕາມຜົນການທົດສອບ.

ມັນເປັນການດີທີ່ສຸດ ທີ່ຈະເຮັດການທົດສອບການໄດ້ຍິນ-ຄືນໄຫມ່ໃຫ້ແກ່ເດັກທາຣົກ ໃນຣະຫວ່າງທີ່ເດັກມີອາຍຸນຶ່ງອາທິດຫານຶ່ງ ເດືອນ. ທາງໂຮງພະຍາບານກໍຈະເຮັດການນັດຫມາຍ ເພື່ອເຮັດການທົດສອບການໄດ້ຍິນ-ຄືນໄຫມ່ໃຫ້ທ່ານ. ໃນຣະຫວ່າງນີ້ ທາງສູນປະສານງານກ່ຽວກັບການທົດສອບການໄດ້ຍິນປະຈຳທ້ອງຖິ່ນ (HCC) ຂອງໂຄງການທົດສອບການໄດ້ຍິນຂອງເດັກທາຣົກເກີດ ໄຫມ່ຂອງຣັດຄາລິຟໍເນັຍ ກໍມີໄວ້ຊ່ວຍທ່ານ ແລະທາຣົກຂອງທ່ານເພື່ອໃຫ້ໄດ້ຮັບການບໍຣິການທີ່ທ່ານຕ້ອງການ.

## ມັນເປັນສິ່ງສຳຄັນຕໍ່ການຮັກສາການນັດຫມາຍເພື່ອໄປເຮັດການຕຣວດວິຈັຍ-ຄືນໄໝ່ນັ້ນໄວ້.

ການຕຣວດວິຈັຍ-ຄືນໄຫມ່ດັ່ງກ່າວນີ້ ຖືວ່າເປັນບາດກ້າວນຶ່ງ ໃນການພິສູດເບິ່ງການໄດ້ຍິນ, ຄວາມກ້າວຫນ້າກ່ຽວກັບການປາກເວົ້າແລະພາສາຂອງເດັກຂອງທ່ານ. ການເສັຽຫູ ຫລືການທີ່ເດັກບໍ່ໄດ້ ຍິນສຽງນັ້ນສາມາດເຮັດໃຫ້ເບິ່ງບໍ່ເຫັນ ຫລືບໍ່ຮູ້ໄດ້. ປັດຈຸບັນນີ້, ເຄື່ອງເທັກໂນໂລຈີເຮັດໃຫ້ພົບເຫັນການເສັຽຫູຕັ້ງແຕ່ຕອນຕົ້ນໃນ ຊີວິດຂອງເດັກ.

ເດືອນ ແລະປີທຳອິດໃນຊີວິດຂອງເດັກ ແມ່ນມີຄວາມສຳຄັນຫລາຍທີ່ສຸດສຳລັບການສ້າງຄວາມຊຳນານກ່ຽວກັບການເວົ້າຈາ ພົວພັນ. ເດັກທາຣົກຜູ້ທີ່ເສັຽຫູ ຫລືຫູຫນວກນັ້ນ ອາດຈະມີຄວາມຫຍຸ້ງຍາກໃນການສ້າງຄວາມຊຳນານທາງດ້ານພາສາປາກເວົ້າ ແບບທັມມະດາຫລືອາດຈະຮຽນບໍ່ເກັ່ງໃນໂຮງຮຽນ. ດ້ວຍເຫດນີ້ ມັນຈຶ່ງເປັນສິ່ງສຳຄັນ ຕໍ່ການຊພິສູດເບິ່ງການເສັຽຫູ ແລະຈັດຫາການ ບໍຣິການແບບພິເສດໃຫ້ແກ່ເດັກທາຣົກແລະຄອບຄົວແຕ່ຫົວທີ.



## ທ່ານຈະເຮັດຢ່າງໃດ ເພື່ອຕຽມການ ສຳລັບການຕຣວດວິຈັຍການໄດ້ຍິນ-ຄືນໄໝ່ຂອງເດັກ?

ມັນຈະເປັນການດີທີ່ສຸດ ຖ້າຫາກວ່າເດັກທາຣົກຂອງທ່ານນອນ ຫລັບໃນຣະຫວ່າງການທົດສອບ. ຂໍ້ແນະນຳບາງຢ່າງເພື່ອຊ່ວຍທ່ານ ຈັດຕຽມເອົາທາຊຣົກຂອງທ່ານໄປຕຣວດວິຈັຍການໄດ້ຍິນ-ຄືນໄຫມ່ນັ້ນ ມີຣວມທັງ:

໑. ພະຍາຍາມບໍ່ປ່ອຍໃຫ້ເດັກຂອງທ່ານນອນກ່ອນເວລານັດຫມາຍ
໒. ການປ້ອນອາຫານໃຫ້ເດັກຂອງທ່ານ ໃນຣະຍະເວລາຫນ້ອຍນຶ່ງກ່ອນທີ່ຈະທຳການທົດສອບນັ້ນ ອາດຈະຊ່ວຍເຮັດໃຫ້ເດັກນອນ
໓. ຖືເອົາຜ້າຫົ່ມ, ຜ້າໄດເປີຫລາຍໆຜືນ, ເຄື່ອງນຸ່ງສຳລັບໄວ້ປ່ຽນ, ແລະນົມຫລາຍໆ, ຖ້າວ່າໄດ້ໃຊ້.



## ແມ່ນຫຍັງຈະເກີດຂຶ້ນ ຫລັງຈາກການວິຈັຍການໄດ້ຍິນສຽງ-ຄືນໄໝ່?

ທ່ານຫມໍ ຫລືຜູ້ໃຫ້ການດູແລຮັກສາສຸຂພາບຂອງທ່ານ ຫລືຂອງ ເດັກຂອງທ່ານຈະບອກຜົນຂອງການຕຣວດວິຈັຍ-ຄືນໄຫມ່ກ່ຽວກັບການ ໄດ້ຍິນໃຫ້ທ່ານຊາບ. ມີເດັກສ່ວນນ້ອຍທີ່ຈະຕ້ອງການ ການປະເມີນ ເບິ່ງຄຸນນະພາບກ່ຽວກັບການໄດ້ຍິນນັ້ນແບບທົດສອບຢ່າງເຕັມສ່ວນ. ຖ້າຫາກຜົນຂອງການຕຣວດວິຈັຍໃນເວລາທີ່ທຳການວິຈັຍ-ຄືນໄຫມ່ ນັ້ນພົບວ່າເດັກຂອງທ່ານນັ້ນຕ້ອງການໆວິຈັຍເບິ່ງການໄດ້ຍິນແລ້ວ, ບຸກຄົນຜູ້ທີ່ທຳການວິຈັຍ-ຄືນໄຫມ່ ກໍອາດຈະເຮັດນັດຫມາຍເພື່ອເຮັດ ການວິຈັຍໃຫ້ທ່ານ ຫລືສົ່ງທ່ານໄປຫາຫມໍຜູ້ໃຫມ່.

ການຕັ້ງອົກຕັ້ງໃຈຕິດຕາມເບິ່ງຄວາມກ້າວຫນ້າຂອງພາສາ ແລະ ການປາກເວົ້າຂອງເດັກຂອງທ່ານແມ່ນເປັນສິ່ງທີ່ສຳຄັນ. ຣາຍລະອຽດ ກ່ຽວກັບ "ການໄດ້ຊຍິນ & ການປາກເວົ້າ ອາຍຸ & ຂັ້ນຕອນ" ຢູ່ໃນປຶ້ມ ນ້ອຍຫົວນີ້ ໄດ້ແຈ້ງບອກບາງຢ່າງກ່ຽວກັບສິ່ງທີ່ບັນດາທາຣົກ ສ່ວນ ຫລາຍຈະເຮັດໄປຕາມຂັ້ນຕອນຂອງອາຍຸທີ່ແຕກຕ່າງກັນ.

## ການໄດ້ຍິນ & ການປາກເວົ້າ ອາຍຸ & ຂັ້ນຕອນ

### ຈາກມື້ເກີດ ເຖິງ ໓ ເດືອນ

- ມີດຽບ ຕໍ່ສຽງທີ່ຄຸ້ນເຄີຍ
- ມີພຶດຕິການ ຕໍ່ສຽງທີ່ດັງແຮງ, *ຕົກໃຈ, ພັບຕາ, ຫຍຸດດູດ, ຮ້ອງໄຫ້, ຫລືຕື່ນນອນ*
- ເຮັດສຽງເບົາໆເມື່ອຕື່ນນອນ, *ຄວງຄໍ*

### ໓ ເຖິງ ໖ ເດືອນ

- ເຫລືອດຕາ ຫລືງວກຫນ້າໄປຕາມສຽງດັງ, *ສຽງປາກ, ສຽງເຄື່ອງຫລິ້ນຂອງເດັກ, ສຽງຫມາເຫົ່າ*
- ເລີ້ມປາກເວົ້າແບບມີສຽງ, *"ກາ," "ອູອູ," "ບະ"* ແລະສຽງ*ພິ, ບີ, ແອັມ*
- ມີພຶດຕິການ ຕໍ່ການປ່ຽນສຽງເວົ້າຂອງທ່ານ

### ໖ ເຖິງ ໙ ເດືອນ

- ມີພຶດຕິການຂານຕອບ ເມື່ອເອີ້ນຊື່ຕົວເອງ ແລະຫລຽວເບິ່ງເມື່ອເວລາເອີ້ນ.
- ເຂົ້າໃຈຄຳເວົ້າແບບງ່າຍໆ ເຊັ່ນຄຳວ່າ *"ບໍ່," "ບາຍ-ບາຍ," "ນ້ຳຈຸສ"*
- ເວົ້າແບບຍຽງສາ, *"ດາ ດາ ດາ," "ມາ ມາ ມາ," "ບາ ບາ ບາ"*

### ໙ ເຖິງ ໑໒ ເດືອນ

- ມີພຶດຕິການຂານຕອບ ຕໍ່ທັງສຽງເບົາໆ ຫລືສຽງແຮງໆ
- ຫລ່ຳຄວາມເວົ້າແຕ່ລະຄວາມ ແລະລຽນແບບສຽງສັດ
- ຊີ້ໄປໃສ່ເຄື່ອງຫລິ້ນ ຫລືອາຫານອັນທີ່ມັກ ເມື່ອຖາມເອົາໃຫ້

### ໑໒ ເຖິງ ໑໘ ເດືອນ

- ມັກໃຊ້ ໑໐ ຄຳເວົ້າ ຫລືຫລາຍກວ່ານັ້ນ
- ປະຕິບັດຕາມການບອກໃຫ້ເຮັດແບບງ່າຍ, *"ໄປເອົາຫມາກບານ"*
- ຊີ້ໃສ່ຄົນ, ສ່ວນປະກອບຕ່າງໆຂອງຮ່າງກາຍ ຫລືເຄື່ອງຫລິ້ນເມື່ອບອກໃຫ້ເຮັດ
- *"ເຕັ້ນ"* ຕາມສຽງເພງ

### ໑໘ ເຖິງ ໒໔ ເດືອນ

- ມັກໃຊ້ ໒໐ ຄຳເວົ້າ ຫລືຫລາຍກວ່ານັ້ນ
- ຕໍ່ຄຳເວົ້າ ໒ ຄຳ ຫລືຫລາຍກວ່າເຂົ້າໃສ່ກັນ, *"ຢາກໄດ້ ນ້ຳຈຸສຕື່ມ," "ອັນນັ້ນແມ່ນຫຍັງ?"*
- ມັກໃຊ້ ສຽງພະຍັນຊນະຫລາຍອັນໃນເວລາເລີ້ມຄຳເວົ້າ, *ບີ, ຈີ,ແອັມ*
- ຟັງນິທານ ແລະຟັງເພງແບບງ່າຍໆ

### ໒ ເຖິງ ໓ ປີ

- ມັກໃຊ້ປະໂຍກແບບ ໒-໓ ຄຳເວົ້າ
- ເມື່ອອາຍຸ ໒ ປີ, ຄົນສາມາດເຂົ້າໃຈໃນສິ່ງທີ່ເດັກເວົ້າ ເປັນບາງຄັ້ງບາງຄາວນັ້ນ ໄດ້ (໒໕% - ໕໐%)
- ເມື່ອອາຍຸ ໓ ປີ, ຄົນສາມາດເຂົ້າໃຈໃນສິ່ງທີ່ເດັກເວົ້າ ເປັນບາງຄັ້ງບາງຄາວນັ້ນ ໄດ້ (໕໐% - ໗໕%)
- ປະຕິບັດຕາມຄຳແນະນຳໄດ້ສອງ-ກ້າວ *"ໄປເອົາຫມາກບານ ແລ້ວເອົາໄປວາງລົງໃສ່ໂຕະ)*

***ການທົດສອບການໄດ້ຍິນນັ້ນ ສາມາດທົດສອບເບິ່ງໄດ້ໃນທຸກໆອາຍຸ.***

## ຈະເຮັດການຕຣວດວິຈັຍການໄດ້ຍິນສຽງ ໃຫ້ແກ່ເດັກຂອງຂ້າພະເຈົ້າຄືນໃໝ່ນັ້ນໄດ້ຍ່າງໃດ?

ການຕຣວດວິຈັຍ-ຄືນໃຫມ່ນັ້ນມັນຈະຄ້າຍໆຄືກັນຫລາຍທີ່ ສຸດກັບການເຮັດການຕຣວດວິຈັຍການໄດ້ຍິນສຽງເທື່ອທຳອິດທີ່ເດັກຂອງທ່ານໄດ້ເຮັດຢູ່ໂຮງຫມໍ. ການທົດສອບດັ່ງກ່າວນີ້ ຈະໃຊ້ເວລາພຽງແຕ່ສອງສາມນາທີ ຊຶ່ງສ່ວນຫລາຍນັ້ນ ມັກຈະເຮັດໃນເວລາທີ່ເດັກຂອງທ່ານນອນຫລັບ. ທ່ານຫມໍຈະເປີດສຽງເບົາໆຜ່ານເຂົ້າທາງເຄື່ອງຟັງແບບສຸບໃສ່ຫູ (earphones) ທີ່ເຮັດໃຊ້ສະເພາະກັບເດັກທາຣົກ. ພຶດຕິການຂານຕອບຂອງເດັກຂອງທ່ານຕໍ່ສຽງທົດສອບດັ່ງກ່າວນັ້ນ ຈະຖືກວັດແທກໂດຍເຄື່ອງວັດແທກການຟັງສຽງແບບ (OAE) ໂດຍອັຕໂນມັດ ຫລືຈະຖືກວັດແທກໂດຍເຄື່ອງວັດແທກການການໄດ້ຍິນສຽງ ແບບ (ABR) ຊຶ່ງທັງສອງຣະບົບນີ້ ຈະເປັນຣະບົບໃດກໍຕາມແມ່ນເຫມາະສົມສຳລັບການຕຣວດວິຈັຍການໄດ້ຍິນສຽງ-ຄືນໃຫມ່.

## ແມ່ນໃຜເປັນຜູ້ຈ່າຍຄ່າການຕຣວດວິຈັຍການໄດ້ຍິນສຽງ-ຄືນໃໝ່ນີ້?

ຄ່າການໃຊ້ຈ່າຍກ່ຽວກັບການຕຣວດວິຈັຍການໄດ້ຍິນຂອງທາ ຣົກເຊີດໃຫມ່ນັ້ນອາດຈະຖືກປະກັນ ຫລືຄຸ້ມຄອງໂດຍທາງປະກັນພັຍສຸຂພາບຂອງທ່ານ. Medi-Cal ຈະຈ່າຍຄ່າການຕຣວດວິຈັຍໃຫ້ແກ່ບັນດາເດັກທາຣົກຜູ້ທີ່ມີສິດທີໄດ້ຮັບ.



## ການນັດໝາຍໄປຕຣວດວິຈັຍການໄດ້ຍິນສຽງຂອງລູກຂອງທ່ານ-ເທື່ອໃໝ່ະ

ຊື່ເດັກຂອງທ່ານະ

______________________________

ວັນ & ເວລານັດຫມາຍະ

______________________________

ສະຖານທີ່ນັດຫມາຍະ

______________________________

ເລກໂທຣະສັບຕິດຕໍ່ບ່ອນນັດຫມາຍະ

______________________________

(ກະຣຸນາໂທໄປຫາ ຖ້າຫາກວ່າທ່ານຕ້ອງການເຮັດນັດຫມາຍຂອງທ່ານໃຫມ່ອີກ)

### ໂຄງການຕຣວດວິຈັຍການໄດ້ຍິນສຽງຂອງເດັກເກີດໃໝ່ຂອງຣັດຄາລີຟໍເນັຍ

ຈຸດຄາດຫມາຍຂອງໂຄງການຕຣວດວິຈັຍການໄດ້ຍິນຂອງເດັກເກີດໃຫມ່ຂອງຣັດຄາລີຟໍເນັຍ ແມ່ນເພື່ອພິສູດເບິ່ງບັນດາທາຣົກທີ່ຫູບໍ່ໄດ້ຍິນ ແລະເພື່ອຕໍ່ພວກເຂົາເຈົ້າໄປຫາການບໍຣິການຕ່າງໆ ພາຍໃນອາຍຸຫົກເດືອນ. ໂຄງການດັ່ງກ່າວນີ້ ມີສູນປະສານງານເພື່ອຕຣວດວິຈັຍການໄດ້ຍິນສຽງຢູ່ຫລາຍແຫ່ງ ທີ່ເຮັດວຽກຮ່ວມກັບພວກຫມໍຮັກສາດູແລສຸຂພາບຂອງຄອບຄົວ ແລະຮ່ວມກັບໂຮງພະຍາບານຕ່າງໆ ເພື່ອໃຫ້ແນ່ນອນວ່າ ພວກເດັກນ້ອຍໄດ້ຮັບການບໍຣິການຕ່າງໆທີ່ຕ້ອງການ.

ໂຄງການຕຣວດວິຈັຍການໄດ້ຍິນສຽງຂອງເດັກເກີດໃຫມ່ ເກັບກຳເອົາຣາຍລະອຽດຕ່າງໆກ່ຽວກັບການຕຣວດວິຈັຍການຟັງສຽງຂອງເດັກຂອງທ່ານຕາມກົດຫມາຍກ່ຽວກັບການຮັກສາສຸຂພາບ ແລະຄວາມປອດພັຍມາຕຣາ ໑໒໔໑໑໖. ສູນປະສານງານເພື່ອຕຣວດວິຈັຍການໄດ້ຍິນສຽງ ອາດຈະໃຊ້ຣາຍຣະອຽດດັ່ງກ່າວນີ້ ເພື່ອຊ່ວຍທ່ານ ແລະເດັກຂອງທ່ານ ໃຫ້ໄດ້ຮັບການບໍຣິການຕ່າງໆ ທີ່ທ່ານອາດຈະຕ້ອງການ. ມັນເປັນໄປໄດ້ ທີ່ທາງສູນປະສານງານ ເພື່ອຕຣວດວິຈັຍການໄດ້ຍິນສຽງອາດຈະຕິດຕໍ່ຫາທ່ານກ່ຽວກັບການບໍຣິການອັນຕໍ່ໄປຕ່າງໆ.

**ຕ້ອງການຣາຍລະອຽດເພີ້ມເຕີມ**
**ກ່ຽວກັບໂຄງການຕຣວດວິຈັຍການໄດ້ຍິນສຽງ,**
**ໃຫ້ໂທແບບບໍ່ໄດ້ເສັຍຄ່າໄປຍັງ**
**1-877-388-5301**

Children's Medical Services
714 P Street
Sacramento, CA 95814

Gray Davis
ຜູ້ວ່າຣາຊການຣັດ
State of California

Grantland Johnson
ເລຂາທິການ
Health and Human Services Agency

Diana M. Bonta', R.N., Dr. P.H.
ຜູ້ອຳນວຍການ
Department of Health Services

CMS Contract 98-16110

Publication Number 848

Rev. 3/2000 Lao